ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

*******

ທະນາຄານແຫ່ງ ສ.ປ.ປ.ລາວ

ຫ້ອງການ

ເລກທີ 386 /ທຫ

ນະຄອນຫລວງວຽງຈັນ, ວັນທີ 12 NOV 2010

## ແຈ້ງການ

## ກ່ຽວກັບການຈຳໜ່າຍ ທະນະບັດ ແລະ ຫລຽນທີ່ລະນຶກ

ເພື່ອປະກອບສ່ວນ ເຂົ້າໃນງານສະເຫລີມສະຫລອງວຽງຈັນເປັນນະຄອນຫລວງ ຄົບຮອບ 450 ປີ ແລະ ວັນສະຖາປະນາ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຄົບຮອບ 35 ປີ.

ໂດຍການອະນຸຍາດ ຂອງລັດຖະບານ, ທະນາຄານ ແຫ່ງ ສປປ ລາວ ໄດ້ພິມຈຳໜ່າຍທະນະບັດ ແລະ ຫລຽນທີ່ລະນຶກ ດັ່ງມີລາຍລະອຽດຄື:

1. **ທະນະບັດທີ່ລະນຶກ.**

ປະເພດມູນຄ່າ 100.000 ກີບ (ໜຶ່ງແສນກີບ)

ດ້ານໜ້າ: ມີຮູບພະເຈົ້າໄຊຍະເສດຖາທິລາດ, ພະທາດຫລວງ, ດອກຈຳປາ ແລະ ຮູບນາກ.

ດ້ານຫລັງ: ມີຮູບວັດພະແກ້ວ ແລະ ດອກຈຳປາ.

ຂະໜາດ: 68 X 159 ມມ.

**ລັກສະນະທາງດ້ານເຕັກນິກ:** ທະນະບັດທີ່ລະນຶກດັ່ງກ່າວ ແມ່ນພິມດ້ວຍເຈັ້ຍພິມພິເສດ ຄຸນນະພາບສູງ, ມີຮູບລາຍນ້ຳ, ກຳນົດຈຸດນິລະໄພຕ່າງໆ ຕ້ານການປອມແປງ, ພິມດ້ວຍນ້ຳມຶກ ແລະ ສີພິເສດຕ້ານການອັດສຳເນົາ.

**ທະນະບັດທີ່ລະນຶກນີ້ ສາມາດນຳໃຊ້ຊຳລະໜີ້ໄດ້ຕາມກົດໝາຍ.**

ດ້ານໜ້າ




ດ້ານຫລັງ

